LAO

# Commonwealth Ombudsman

## ທ່ານອອມບອສແມນຂອງຣັຖບານກາງ

ທ່ານອອມບອສແມນຂອງຣັຖບານກາງຄືຜູ້ພິພາກສາເອກຣາດທີ່ມີໜ້າທີ່ສອບສວນເບິ່ງຄຳຕິຕຽນຮ້ອງທຸກກ່ຽວກັບການເຮັດວຽກຂອງກະຊວງຕ່າງໆຂອງຣັຖບານກາງ.

## ບົດບາດໜ້າທີ່ຂອງທ່ານອອມບອສແມນ

ທ່ານອອມບອສແມນສາມາດສອບສວນເຣື່ອງຄຳຕິຕຽນຮ້ອງທຸກກ່ຽວກັບການເຮັດວຽກຂອງກະຊວງຕ່າງໆ ຂອງຣັຖບານກາງ, ຮວມເຖິງຫ້ອງການເຊັນເຕີລິ້ງ (Centrelink), ກົມພາສີອາກອນ (Tax Office), ຫ້ອງການເກັບເງິນຄ່າລ້ຽງດູລູກ (Child Support Agency), ກະຊວງກວດຄົນເຂົ້າເມືອງ (Immigration Department) ແລະ ຫ້ອງການໄປສະນີ (Australia Post).

ເປັນໜ້າທີ່ຂອງທ່ານອອມບອສແມນທີ່ຈະພິຈາຣະນາວ່າການກະທຳຫຼືການຕັດສິນໃຈຂອງກະຊວງຕ່າງໆເຫຼົ່ານັ້ນມີການຜິດພາດ, ບໍ່ມີເຫດຜົນພຽງພໍ, ບໍ່ຍຸຕິທັມ ຫຼື ມີການແບ່ງແຍກຊົນຊັ້ນຜິວພັນ ຫຼືບໍ່. ນອກຈາກນີ້ ເພິ່ນຍັງຮັບຜິດຊອບການສອບສວນໃນເຣື່ອງການເຮັດວຽກລ່າຊ້າຫຼືລະເລີຍບໍ່ເຮັດວຽກຂອງກະຊວງຕ່າງໆ.

ແຕ່ໃນຂນະດຽວກັນ, ທ່ານອອມບອສແມນຈະບໍ່ສາມາດສອບສວນການຕິຕຽນຮ້ອງທຸກເຣື່ອງສ່ວນຕົວຂອງບຸກຄົນຫຼືບໍຣິສັດ, ການຕັດສິນຂອງສານ, ຫຼືການກະທຳຂອງຣັຖບານປະຈຳຣັດຫຼືຂອງເທສບານ, ການກະທຳຂອງຣັຖມົນຕຣີ ຫຼືຂອງບາງໜ່ວຍຣັຖວິສາຫະກິດ.

ທ່ານອອມບອສແມນຈະບໍ່ເຂົ້າຂ້າງໃຜແລະເພິ່ນຈະມຸ້ງໝັ້ນຕໍ່ການໃຫ້ໄດ້ຜົນຮັບທີ່ຍຸຕິທັມ.

ທ່ານອອມບອສແມນຈະກະທຳໃນສິ່ງທີ່ຊ່ວຍປັບປຸງການບໍຣິການຂອງຣັຖບານ ເພື່ອປ້ອງກັນບໍ່ໃຫ້ມີບັນຫາເກົ່າເກີດຊ້ຳຕື່ມອີກ.

## ອຳນາດຂອງທ່ານອອມບອສແມນ

ທ່ານອອມບອສແມນມີອຳນາດກວ້າງເຖິງຂັ້ນສາມາດສອບສວນການຕິຕຽນຮ້ອງທຸກຕ່າງໆໄດ້, ຮວມທັງອຳນາດໃນການບັງຄັບພະນັກງານໃຫ້ຄວາມຮ່ວມມືໃນການມອບຫຼັກຖານແລະຕອບຄຳຖາມຕ່າງໆອີກດ້ວຍ.

ຖ້າທ່ານອອມບອສແມນພົບວ່າມີການບໍຣິຫານຜິດພາດ, ທ່ານສາມາດແນະນຳໃຫ້ທາງການທີ່ກ່ຽວຂ້ອງແກ້ໄຂຄວາມຜິດພາດຫຼືຊົດໃຊ້ຄ່າເສັຍຫາຍທີ່ກໍ່ນັ້ນ.

ຍົກຕົວຢ່າງ, ທ່ານສາມາດແນະນຳໃຫ້ທາງການທີ່ກ່ຽວຂ້ອງອະທິບາຍຫຼືຂໍໂທດ, ນຳໃຊ້ຫຼືປ່ຽນແປງການຕັດສິນໃຈ, ລົບລ້າງໜີ້ ຫຼື ຈ່າຍເງິນຊົດເຊີຍຄ່າເສັຍຫາຍ.

## ຈະທຳການຕິຕຽນຮ້ອງທຸກໄດ້ຢ່າງໃດ

ກ່ອນຈະຕິດຕໍ່ກັບຫ້ອງການຂອງທ່ານອອມບອສແມນ, ທ່ານຄວນຫາທາງແກ້ໄຂບັນຫາໂດຍຕິງກັບທາງກະຊວງນັ້ນເສັຍ ກ່ອນ ວ່າບັນຫາຄືຫຍັງ, ໂດຍຮ້ອງຮຽນໄປຫາໜ່ວຍບໍຣິ ການຮັບຟັງຂໍ້ຕິຕຽນປະຈຳກະຊວງນັ້ນໆ, ຖ້າເຂົາມີບໍຣິການດັ່ງກ່າວຢູ່ແລ້ວ. ຖ້າທ່ານບໍ່ພໍໃຈຕໍ່ການຕັດສິນໃຈຂອງກະຊວງ, ທ່ານຄວນຍື່ນຂໍໃຫ້ທາງກະຊວງທຳການທົບທວນການຕັດສິນໃຈໃຫ້ໃໝ່ເສັຍກ່ອນ, ຖ້າເປັນໄປໄດ້.

ທ່ານອອມບອສແມນມີຫ້ອງການຢູ່ຕາມຫົວເມືອງຫຼວງຂອງ ທຸກ ຣັດ. ທ່ານສາມາດຍື່ນຄຳຕິຕຽນຮ້ອງທຸກດ້ວຍຕົນເອງ ຫຼື ທາງໂທຣະສັບ, ທາງຈົດໝາຍ, ທາງໂທຣະພິມ ຫຼື ທາງອີແມລ.

ນອກນີ້ ທ່ານຍັງສາມາດໂທຣະສັບຫາທ່ານອອມບອສແມນໄດ້ທີ່ເບີ 1300 362 072 **ໂດຍເສັຍຄ່າໂທຣເທົ່າກັບການໂທຣທ້ອງຖິ່ນ.**

ນອກຈາກນີ້ ທ່ານຍັງສາມາດມອບສິດໃຫ້ຄົນອື່ນ, ໝູ່ເພື່ອນ, ຍາດພີ່ນ້ອງ ຫຼື ພະນັກງານສົງເຄາະຊຸມຊົນ ໃຫ້ຊ່ວຍຍື່ນຄຳຕິຕຽນຮ້ອງທຸກຕາງໜ້າທ່ານໄດ້.

ຜູ້ທີ່ບໍ່ປາກພາສາອັງກິດເປັນພາສາເຄົ້າທີ່ປະສົງຢາກຕິດຕໍ່ຫ້ອງການຂອງທ່ານອອມບອສແມນ ສາມາດຕິດຕໍ່ຜ່ານຜແນກແປເອກສານແລະແປພາສາ Translation and Interpreting Service (TIS) ໂດຍໂທຣຫາເບີ 131 450 ຫຼືຈະຍື່ນຄຳຮ້ອງທຸກເປັນລາຍລັກອັກສອນ ໂດຍຂຽນເປັນພາສາລາວກໍໄດ້.

## ບໍຣິການນີ້ຖືເປັນຄວາມລັບແລະບໍ່ຄິດຄ່າບໍຣິການ

ການສອບສວນເຣື່ອງຕິຕຽນຮ້ອງທຸກທັງໝົດຈະຖືເປັນຄວາມລັບແລະແມ່ນບໍຣິການຟຣີ.

# ທ່ານມີສິດໃນການ ຮ້ອງທຸກ

**ຂໍ້ມູນໃນເຈັ້ຍນີ້ແມ່ນພຽງແຕ່ແນວທາງຊີ້ນຳເທົ່ານັ້ນ. ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ໂປຼດຕິດຕໍ່ຫາຫ້ອງການທ່ານອອມບອສແມນຂອງຣັຖບານກາງໄດ້.**

## ຕິດຕໍ່ພວກເຮົາ

ດ້ວຍຣາຄາຄ່າໂທຣທ້ອງຖິ່ນ, ທ່ານສາມາດຕິດຕໍ່ຫາຫ້ອງການທ່ານອອມບອສແມນທີ່ໃກ້ບ້ານທ່ານທີ່ສຸດ ໂດຍໂທຣຫາ

**ສາຍໂທຣະສັບເພື່ອກ່າວຄຳຕິຕຽນຮ້ອງທຸກແຫ່ງຊາດ** – 1300 362 072
(ໂປຼດສັງເກດ: ຖ້າໂທຣຈາກມືຖືຈະໄດ້ເສັຍຄ່າໂທຣຕາມອັດຕຣາຄ່າໂທຣມືຖືນັ້ນ)

Email ombudsman@ombudsman.gov.au
Web www.ombudsman.gov.au

## ຫ້ອງການທ່ານອອມບອສແມນຂອງຣັຖບານກາງ

**ADELAIDE**
ໂທຣ 1300 362 072
ແຟກຊ໌ 08 8226 8618
Level 5, 50 Grenfell Street
Adelaide SA 5000

**BRISBANE**
ໂທຣ 1300 362 072
ແຟກຊ໌ 07 3229 4010
Level 17, 53 Albert Street
Brisbane QLD 4000

**CANBERRA & ສູນກາງແຫ່ງຊາດ**
ໂທຣ 1300 362 072
ແຟກຊ໌ 02 6249 7829
GPO Box 442
Canberra ACT 2601

Ground Floor, 1 Farrell Place
Canberra City ACT 2600

**DARWIN**
ໂທຣ 1300 362 072
ແຟກຊ໌ 08 8941 5400
GPO BOX 1344, Darwin NT 0801

Level 12, NT House
Cnr Bennett & Mitchell Streets
Darwin NT 0801

**HOBART**
ໂທຣ 1300 362 072
ແຟກຊ໌ 03 6233 8966
GPO Box 960
Hobart Tas 7001

Ground Floor
99 Bathurst Street
Hobart TAS 7000

**MELBOURNE**
ໂທຣ 1300 362 072
ແຟກຊ໌ 03 9867 3750
Level 1
441 St Kilda Road
Melbourne VIC 3004

**PERTH**
ໂທຣ 1300 362 072
ແຟກຊ໌ 08 9221 4381
PO Box Z5386
St Georges Terrace
Perth WA 6831

Level 12, St Martin's Tower
44 St Georges Terrace
Perth WA 6000

**SYDNEY**
ໂທຣ 1300 362 072
ແຟກຊ໌ 02 9211 4402
PO Box K825
Haymarket NSW 1240

Level 7, North Wing
Sydney Central
477 Pitt Street
Sydney NSW 2000

## ບໍຣິການນີ້ມີໄວ້ຊ່ວຍທ່ານໃນການຍື່ນຄຳຕິຕຽນຮ້ອງທຸກ

ຖ້າທ່ານປາກພາສາອັງກິດບໍ່ໄດ້ດີ, ເຮົາສາມາດຊ່ວຍທ່ານໄດ້ໂດຍຜ່ານຜແນກແປເອກສານແລະແປພາສາ Translating and Interpreting Service (TIS) ທີ່ເບີ 131 450.

**ຖ້າທ່ານພິການຫູ, ຕາບອດ ຫຼື ມີບັນຫາດ້ານການເວົ້າກໍມີບໍຣິການ ແບບ TTY ໃຫ້ ໂດຍຜ່ານ National Relay Service ທີ່ເບີ 133 677.**